ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1051 / ຫອຄ. ກຫຄວ

ນະຄອນຫລວງວຽງຈັນ, ວັນທີ 28 ພຶດສະພາ 2019

# ແຈ້ງການ

ເຖິງ: ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

ເລື່ອງ: ກິດຈະການສົ່ງອອກສິນຄ້າ ທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ

- ອີງຕາມຂໍ້ຕົກລົງສະບັບເລກທີ 0023/ອຄ.ກຫຄວ, ລົງວັນທີ 09 ມັງກອນ 2019 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ;
- ອີງຕາມຂໍ້ຕົກລົງສະບັບເລກທີ 0044/ ອຄ.ກຫຄວ, ລົງວັນທີ 18 ມັງກອນ 2019 ວ່າດ້ວຍການຮັບຮອງເອົາກິດຈະການອຸດສາຫະກຳ ແລະ ການຄ້າທີ່ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ.

ເພື່ອເປັນການສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກຢ່າງເຕັມສ່ວນ ແກ່ການສົ່ງອອກຜະລິດຕະພັນສິນຄ້າຂອງປະເທດເຮົາ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງລຸ່ມນີ້:

1. ການສົ່ງອອກສິນຄ້າ ເປັນກິດຈະການ ທີ່ລັດສົ່ງເສີມ ແລະ ບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນທຸລະກິດ ໂດຍໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ລະບຸກິດຈະການດັ່ງກ່າວ ລົງດ້ານຫລັງໃບທະບຽນວິສາຫະກິດເລີຍ ເວັ້ນເສຍແຕ່ກິດຈະການສົ່ງອອກສິນຄ້າທີ່ລັດເກືອດຫ້າມ ຫລື ຜະລິດຕະພັນສິນຄ້າ ທີ່ຂະແໜງການກ່ຽວຂ້ອງ ມີກົດໝາຍ ຫລື ລະບຽບການກຳນົດເປັນຢ່າງອື່ນ;

2. ການລະບຸກິດຈະການສົ່ງອອກສິນຄ້າ ໃສ່ດ້ານຫລັງໃບທະບຽນວິສາຫະກິດນັ້ນ ຕ້ອງຂຽນໃຫ້ຈະແຈ້ງວ່າ: ສົ່ງອອກສິນຄ້າໃດ ເຊັ່ນ: ສົ່ງອອກເຂົ້າ, ກາເຟ ເປັນຕົ້ນ ຫ້າມບໍ່ໃຫ້ລະບຸແບບລວມໆ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ. ຈົ່ງ

ຮກ. ຫົວໜ້າຫ້ອງການ

ນ ກົ່ງສະດອນ ເພັດດາວເຮືອງ



Scanned with CamScanner